# ໃນຖານະເປັນບຸກຄົນກໍາລັງຮັບເອົາການບໍຣິການສຸຂະພາບໂຣກຈິດຂອງສາທາຣະນະ, ສິດທິຂອງຂ້ອຍແມ່ນຫຍັງແດ່?

## ທ່ານສາມາດໃຊ້ສິດທິຕໍ່ລົງໄປນີ້:

- ຖືກເຮັດນໍາດ້ວຍຄວາມນັບຖື ແລະ ຄວາມໃຫ້ກຽດ
- ທີ່ຈະມີສິດສ່ວນຕົວຂອງທ່ານຖືກປົກປ້ອງ
- ທີ່ຈະຊ່ວຍອອກແບບແຜນການປິ່ນປົວ ແລະ ການບໍຣິການຊຶ່ງຈະຕອບສະນອງຄວາມຕ້ອງການຂອງທ່ານ
- ທີ່ຈະເຂົ້າຮ່ວມໃນການຕັດສິນໃຈກ່ຽວກັບການປິ່ນປົວສຸຂະພາບໂຣກຈິດຂອງທ່ານ
- ທີ່ຈະຮັບເອົາການບໍຣິການຢູ່ໃນສະຖານທີ່ຊຶ່ງປາສຈາກສິ່ງກີດກັ້ນ (ເຂົ້າເຖິງທາງໃນໄດ້)
- ທີ່ຈະຂໍເອົາຣາຍລະອຽດກ່ຽວກັບຊື່, ສະຖານທີ່, ເລກໂທຣະສັບ, ແລະ ພາສາສໍາລັບອົງການທ້ອງຖິ່ນ
- ສິດທີ່ຈະໄດ້ຮັບຈໍານວນ ແລະ ຣະຍະເວລາຂອງການບໍຣິການທີ່ທ່ານຕ້ອງການ
- ທີ່ຈະຂໍເອົາຣາຍລະອຽດກ່ຽວກັບໂຄງຮ່າງ ແລະ ການດໍາເນີນງານຂອງ RSN
- ສິດທິໃນການປິ່ນປົວພາຍໃນ 2 ຊົ່ວໂມງຂອງການປິ່ນປົວສຸກເສີນ ແລະ 24 ຊົ່ວໂມງສໍາລັບການປິ່ນປົວຮີບດ່ວນ
- ທີ່ຈະມີສິດອິສຣະພາບຈາກການແບ່ງແຍກອອກໄປ ຫລື ສິ່ງປັບຢັ້ງ
- ທີ່ຈະໄດ້ຮັບການບໍຣິການເຫມາະສົມຕາມອາຍຸ ແລະ ວັທນະທັມ
- ທີ່ຈະໄດ້ຮັບນາຍພາສາທີ່ຖືກຮັບປະກັນ ແລະ ເອກສານແປພາສາແລ້ວໂດຍບໍ່ຄິດຄ່າຈາກທ່ານ
- ທີ່ຈະເຂົ້າໃຈໃນຫົນທາງ ແລະ ທາງເລືອກຂອງການປິ່ນປົວທີ່ມີຢູ່
- ທີ່ຈະປະຕິເສດການປິ່ນປົວທີ່ຖືກວາງອອກແນວໃດແນວນຶ່ງ
- ທີ່ຈະຮັບເອົາການປິ່ນປົວຊຶ່ງບໍ່ໄດ້ແບ່ງແຍກຂຶ້ນຢູ່ກັບມນະຕໍ່ທ່ານ (ເຊັ່ນວ່າອາຍຸ, ການປິ່ນປົວ, ຊະນິດຂອງການເຈັບປ່ວຍ)
- ທີ່ຈະມີອິສຣະພາບຈາກການສະແວງຫາຜົນປະໂຍດ ຫລື ການລ່ວງລໍ້າທາງເພດ
- ທີ່ຈະຮັບເອົາການອະທິບາຍກ່ຽວກັບຢາທີ່ຖືກສັ່ງຊື້ທຸກໆຢ່າງ ແລະ ຜົນສະທ້ອນທີ່ອາດຈະເປັນໄປໄດ້
- ທີ່ຈະເຮັດຄໍາຊີ້ນໍາແນວທາງລ່ວງຫນ້າ, ຊຶ່ງຈະບອກທາງເລືອກ ແລະ ຄວາມຊອບໃຈຂອງທ່ານສໍາລັບການປິ່ນປົວສຸຂະພາບໂຣກຈິດ
- ທີ່ຈະຮັບເອົາການບໍຣິການທີ່ມີຄຸນນະພາບຊຶ່ງຈໍາເປັນຕ້ອງໄດ້ປິ່ນປົວ
- ທີ່ຈະມີທັສນະທີສອງຈາກຜູ້ຊ່ຽວຊານສຸຂະພາບໂຣກຈິດ
- ທີ່ຈະຍື່ນຄໍາຮ້ອງທຸກນໍາອົງການ ຫລື RSN ຂອງທ່ານ
- ທີ່ຈະຍື່ນຄໍາອຸທອນ PIHP ອີງຕາມໃບແຈ້ງການກະທໍາ PIHP
- ທີ່ຈະເລືອກເອົາທ່ານຫມໍປິ່ນປົວສຸຂະພາບໂຣກຈິດ ຫລື ເລືອກເອົາຄົນນຶ່ງໃຫ້ລູກຂອງທ່ານຜູ້ທີ່ມີອາຍຸຕໍ່າກວ່າ ສິບສາມ ປີ
- ທີ່ຈະປ່ຽນທ່ານຫມໍປິ່ນປົວສຸຂະພາບໂຣກຈິດໃນຣະຫວ່າງ 30 ວັນທໍາອິດ, ແລະ ບາງເທື່ອຫລາຍກວ່ານັ້ນ
- ທີ່ຈະຍື່ນຄໍາຮ້ອງຂໍເອົາການຟັງເຣື່ອງ (Fair Hearing) ຂອງອໍານາດການປົກຄອງ
- ທີ່ຈະຂໍເອົາ ແລະ ຮັບເອົາໂກປີຂອງບັນທຶກພະຍາບານຂອງທ່ານ ແລະ ຂໍເອົາການປ່ຽນແປງ
- ປາສຈາກການແກ້ແຄ້ນ

**Greater Columbia Behavioral Health**
ສາຍງານອູ້ມຊູຕາມທ້ອງຖິ່ນ
101 N. Edison
Kennewick, WA 99336
509-735-8681/1-800-795-9296